ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການກວດກາແຫ່ງລັດ

ເລກທີ 391/ອກຫລ
ນະຄອນຫຼວງວຽງຈັນ, ວັນທີ 07 ພະຈິກ 2023

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງອົງການກວດກາລັດເມືອງ, ນະຄອນ

- ອີງຕາມ ກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ) ເລກທີ 25/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ເລກທີ 17/ສພຊ, ລົງວັນທີ 18 ທັນວາ 2012;
- ອີງຕາມ ລັດຖະດຳລັດ ຂອງປະທານປະເທດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການກວດກາແຫ່ງລັດ ເລກທີ 141/ປປທ, ລົງວັນທີ 28 ກັນຍາ 2023.

## ປະທານ ອົງການກວດກາແຫ່ງລັດ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການກວດກາລັດເມືອງ, ນະຄອນ ແນໃສ່ຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ອົງການກວດກາລັດເມືອງ, ນະຄອນ ຂຽນເປັນຕົວອັກສອນຫຍໍ້ (ອກລມ....,ອກລ...), ແມ່ນກົງຈັກການຈັດຕັ້ງໜຶ່ງຂອງເມືອງ, ນະຄອນ. ມີພາລະບົດບາດເປັນເສນາທິການໃຫ້ແກ່ເຈົ້າເມືອງ, ເຈົ້ານະຄອນ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງພະນັກງານ-ລັດຖະກອນ, ອົງການຈັດຕັ້ງລັດ ແລະ ພົນລະເມືອງພາຍໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ: 3 ໜ້າທີ່**

ອົງການກວດກາລັດເມືອງ, ນະຄອນ ມີໜ້າທີ່ດັ່ງນີ້:

1. ປະຕິບັດ ລັດຖະທຳມະນູນ, ກົດໝາຍ ແລະ ແຜນການຂອງອົງການກວດກາລັດຂັ້ນເທິງ ກ່ຽວກັບວຽກງານກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງ;
2. ໂຄສະນາ ເຜີຍແຜ່ນະໂຍບາຍ, ກົດໝາຍ, ແຜນການ ແລະ ລະບຽບການ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ;
3. ກວດກາ ການປະຕິບັດນະໂຍບາຍ, ກົດໝາຍ, ແຜນການ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຫ້ອງການຂັ້ນເມືອງ, ບ້ານ ແລະ ການຈັດຕັ້ງອື່ນ ທີ່ນຳໃຊ້ຊັບສິນ ແລະ ງົບປະມານຂອງລັດ;
4. ຊຸກຍູ້, ກວດກາ ຫ້ອງການຂັ້ນເມືອງ, ອົງການປົກຄອງບ້ານ ໃນການຈັດຕັ້ງປະຕິບັດວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ທີ່ຂຶ້ນກັບການຄຸ້ມຄອງ ຂອງອົງການປົກຄອງເມືອງ, ນະຄອນ;
5. ກວດກາ ການຈັດຕັ້ງປະຕິບັດຜົນການກວດກາ ແລະ ກວດກາໂຄງການລົງທຶນຂອງລັດ ເລີ່ມແຕ່ຫົວທີຕາມຂອບເຂດຄວາມຮັບຜິດຊອບ ຂອງອົງການປົກຄອງຂັ້ນເມືອງ;
6. ກວດກາ ການນຳໃຊ້ສິດ, ການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງຫົວໜ້າ ແລະ ຮອງຫົວໜ້າຫ້ອງການຂັ້ນເມືອງ, ຫົວໜ້າ ແລະ ຮອງຫົວໜ້າອົງການຂັ້ນເມືອງ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານລັດວິສາຫະກິດ, ນາຍບ້ານ, ຮອງນາຍບ້ານ ແລະ ຜູ້ໄດ້ຮັບມອບສິດຈາກທາງການ ຂັ້ນເມືອງຄຸ້ມຄອງ;
7. ກວດກາ ວຽກງານທີ່ພົວພັນເຖິງຄວາມຮັບຜິດຊອບຄຸ້ມຄອງ ຂອງຫຼາຍຫ້ອງການຂັ້ນເມືອງ ແລະ ຫຼາຍບ້ານ ທີ່ຂຶ້ນກັບອົງການປົກຄອງຂັ້ນເມືອງ;
8. ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ດຳເນີນການສືບສວນ-ສອບສວນ ຄະດີສໍ້ລາດບັງຫຼວງ ແລະ ຄະດີຟອກເງິນ ທີ່ຕິດພັນກັບການສໍ້ລາດບັງຫຼວງ ຕາມທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ແລະ ກົດໝາຍທີ່ກ່ຽວຂ້ອງ;
9. ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
10. ກວດກາ ການຈັດຕັ້ງປະຕິບັດຜົນການກວດກາ ຂອງຫ້ອງການຂັ້ນເມືອງ, ບ້ານ ແລະ ຕິດຕາມ ຊຸກຍູ້ການປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ກ່ຽວກັບຄະດີສໍ້ລາດບັງຫຼວງ ແລະ ຄະດີຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ;
11. ກວດກາ ການຈັດຕັ້ງ ຂອງຫ້ອງການຂັ້ນເມືອງ, ບ້ານ ເມື່ອມີປາກົດການລະເມີດກົດໝາຍ ແລະ ມະຕິຂອງສະພາປະຊາຊົນ ຂັ້ນແຂວງ;
12. ກວດກາ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ລັດຂັ້ນເມືອງຄຸ້ມຄອງ ໃນການເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບ, ຂາດຈັນຍາບັນ, ຈັນຍາທຳໃນວິຊາຊີບ ຊຶ່ງພາໃຫ້ເກີດຜົນເສຍຫາຍແກ່ຊັບສິນຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ;

13. ກວດກາ ການແຈ້ງຊັບສິນ ແລະ ລາຍຮັບຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານລັດວິສາຫະກິດ ຂອງລັດຂັ້ນເມືອງຄຸ້ມຄອງ;
14. ຄົ້ນຄວ້າປະເມີນຜົນການຈັດຕັ້ງປະຕິບັດວຽກງານ ແລະ ການຍ້ອງຍໍປະຈຳປີ, 05 ປີ ແລະ ຍ້ອງຍໍອື່ນໆ ໃຫ້ພະນັກງານ-ລັດຖະກອນພາຍໃນອົງການກວດກາລັດຂັ້ນເມືອງ ແລະ ຜູ້ເຂົ້າຮ່ວມວຽກງານກວດກາ;
15. ຈັດວາງ, ສັບຊ້ອນ, ບຳລຸງ, ຍົກລະດັບ, ປະເມີນຜົນ, ປະຕິບັດນະໂຍບາຍ ຫຼື ລົງວິໄນ ຕໍ່ພະນັກງານ-ລັດຖະກອນກວດກາລັດເມືອງ, ນະຄອນ;
16. ຄຸ້ມຄອງບໍລິຫານ, ປົກປັກຮັກສາວັດຖຸອຸປະກອນ ແລະ ຊັບສິນທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;
17. ພົວພັນທຸກວຽກງານ ແລະ ປະສານງານກັບອົງການຈັດຕັ້ງລັດ ຂັ້ນເມືອງ ແລະ ບ້ານ ກ່ຽວກັບການດຳເນີນການກວດກາລັດ, ການແກ້ໄຂ ແລະ ປະຕິບັດຜົນການກວດກາ ຕາມພາລະບົດບາດຂອງຕົນ;
18. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານກວດກາລັດ, ສະກັດກັ້ນການສໍ້ລາດບັງຫຼວງ ແລະ ແກ້ໄຂຜົນການກວດກາຕາມຂອບເຂດສິດຂອງຕົນໃຫ້ເຈົ້າເມືອງ, ເຈົ້ານະຄອນ ແລະ ປະທານ ອົງການກວດກາລັດຂັ້ນແຂວງ ຢ່າງເປັນປົກກະຕິ;
19. ປະຕິບັດໜ້າທີ່ອື່ນໆ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 4 ຂອບເຂດສິດ**

ອົງການກວດກາລັດເມືອງ, ນະຄອນ ມີສິດດັ່ງນີ້:

1. ສະເໜີ ເຈົ້າເມືອງ, ເຈົ້ານະຄອນ ພິຈາລະນາແຕ່ງຕັ້ງ ຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ເພື່ອດຳເນີນການກວດກາ;
2. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ຕົກລົງ ດຳເນີນການກວດກາ ຕາມພາລະບົດບາດ, ໜ້າທີ່ ແລະ ສິດຂອງຕົນ, ໃນກໍລະນີບັນຫາຕົກລົງ ຫາກເກີນຂອບເຂດສິດ ແລະ ໜ້າທີ່ຂອງຕົນ ຕ້ອງສະເໜີຕໍ່ເຈົ້າເມືອງ, ເຈົ້ານະຄອນພິຈາລະນາ;
4. ສະເໜີ ປະທານ ອົງການກວດກາລັດຂັ້ນແຂວງ ອອກຄຳສັ່ງເປີດການສືບສວນ-ສອບສວນຄະດີສໍ້ລາດບັງຫຼວງ ແລະ ຄະດີຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ;
5. ສະເໜີ ຫົວໜ້າຫ້ອງການຂັ້ນເມືອງ, ນາຍບ້ານ ດຳເນີນການກວດກາໃນຂອບເຂດຄຸ້ມຄອງຂອງຕົນ;
6. ສະເໜີ ເຈົ້າເມືອງ, ເຈົ້ານະຄອນ ພິຈາລະນາຕົກລົງແກ້ໄຂຜົນການກວດກາໃນຂອບເຂດຄຸ້ມຄອງຂອງຕົນ, ໃນກໍລະນີບໍ່ພິຈາລະນາ ຫຼື ພິຈາລະນາແລ້ວ ແຕ່ຫາກບໍ່ຖືກຕ້ອງ ກໍມີສິດລາຍງານ ປະທານອົງການກວດກາລັດຂັ້ນແຂວງ ເພື່ອພິຈາລະນາຕົກລົງ;
7. ສະເໜີ ອົງການກ່ຽວຂ້ອງ ພິຈາລະນາຄືນບັນຫາບໍ່ເປັນເອກະພາບ ລະຫວ່າງຫົວໜ້າອົງການກວດກາລັດເມືອງ-ນະຄອນ ກັບຫົວໜ້າຫ້ອງການຂັ້ນເມືອງ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ໃນກໍລະນີບໍ່ພິຈາລະນາຄືນ ຫຼື ພິຈາລະນາແລ້ວ ແຕ່ເຫັນວ່າບໍ່ຖືກຕ້ອງ ກໍມີສິດລາຍງານຕໍ່ເຈົ້າເມືອງ, ເຈົ້ານະຄອນ ເພື່ອພິຈາລະນາຕົກລົງ;
8. ສະເໜີ ເຈົ້າເມືອງ, ເຈົ້ານະຄອນ ໂຈະ ຫຼື ຍົກເລີກນິຕິກຳຂອງຫ້ອງການຂັ້ນເມືອງ ແລະ ອົງການປົກຄອງບ້ານ ທີ່ຂັດກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ;

9. ສະເໜີ ໂຈະຊົ່ວຄາວ ການແຕ່ງຕັ້ງ, ສັບຊ້ອນ, ຍົກຍ້າຍ, ສັບປ່ຽນ ຫຼື ການປະຕິບັດໜ້າທີ່ ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດຂັ້ນເມືອງຄຸ້ມຄອງ ທີ່ແມ່ນເປົ້າໝາຍກວດກາ ໃນໄລຍະດຳເນີນການກວດກາ ຫຼື ດຳເນີນການສືບສວນ-ສອບສວນ ບໍ່ທັນສຳເລັດ ບົນພື້ນຖານການປະສານສົມທົບກັບພາກສ່ວນກ່ຽວຂ້ອງ;
10. ສະເໜີ ໃຫ້ອົງການປົກຄອງເມືອງ, ນະຄອນ ໂຈະການປະຕິບັດ ຫຼື ໃຫ້ພິຈາລະນາຄືນໃໝ່ ກ່ຽວກັບການຕົກລົງແກ້ໄຂຜົນຂອງການກວດກາ ທີ່ເຫັນວ່າບໍ່ຖືກຕ້ອງຕາມກົດໝາຍ;
11. ສະເໜີ ມາດຕະການ, ວິທີການແກ້ໄຂຜົນຂອງການກວດກາ ໃຫ້ອົງການຈັດຕັ້ງຂັ້ນເທິງຂອງເປົ້າໝາຍກວດກາ ເພື່ອພິຈາລະນາຕົກລົງ ແລະ ລາຍງານໃຫ້ຂັ້ນເທິງຂອງຕົນ ແລະ ອົງການກວດກາລັດຂັ້ນແຂວງ;
12. ສະເໜີ ໃຫ້ອົງການທີ່ກ່ຽວຂ້ອງ ປະຕິບັດມາດຕະການຕໍ່ຜູ້ກະທຳຜິດຕາມກົດໝາຍ;
13. ປະຕິບັດສິດອື່ນໆ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບກົງຈັກ**

ອົງການກວດກາລັດເມືອງ, ນະຄອນ ມີໂຄງປະກອບກົງຈັກດັ່ງນີ້:
1. ໜ່ວຍງານຄົ້ນຄວ້າ-ສັງລວມ;
2. ໜ່ວຍງານກວດກາລັດ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

ອົງການກວດກາລັດເມືອງ, ນະຄອນ ມີໂຄງປະກອບບຸກຄະລາກອນດັ່ງນີ້:
1. ອົງການກວດກາລັດເມືອງ, ນະຄອນ ປະກອບມີ ປະທານ 01 ສະຫາຍ, ເຊິ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍປະທານ ອົງການກວດກາແຫ່ງລັດ ຕາມການສະເໜີຂອງເຈົ້າແຂວງ, ບົນພື້ນຖານການເຫັນດີເປັນເອກະພາບ ຂອງປະທານ ອົງການກວດກາຂັ້ນແຂວງ ແລະ ເຈົ້າເມືອງ, ເຈົ້ານະຄອນ.

   ປະທານ ອົງການກວດກາລັດເມືອງ, ນະຄອນ ມີຄວາມຮັບຜິດຊອບໂດຍກົງຕໍ່ປະທານອົງການກວດກາລັດຂັ້ນເທິງ ແລະ ເຈົ້າເມືອງ, ເຈົ້ານະຄອນ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງໃນການຈັດຕັ້ງປະຕິບັດພາລະບົດບາດ, ຂອບເຂດສິດ ແລະ ໜ້າທີ່ຂອງຕົນ;
2. ຮອງປະທານ ອົງການກວດກາລັດເມືອງ, ນະຄອນ ຈຳນວນໜຶ່ງ ເຊິ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍເຈົ້າເມືອງ, ເຈົ້ານະຄອນ ຕາມການສະເໜີ ຂອງປະທານ ອົງການກວດກາລັດເມືອງ, ນະຄອນ.

   ຮອງປະທານ ອົງການກວດກາລັດເມືອງ, ນະຄອນ ມີຄວາມຮັບຜິດຊອບໂດຍກົງຕໍ່ປະທານອົງການກວດກາລັດເມືອງ, ນະຄອນ ໃນການປະຕິບັດໜ້າທີ່ວຽກງານຂອງຕົນ ແລະ ຮັບຜິດຊອບລົງເລິກວຽກງານໃດໜຶ່ງຕາມການມອບໝາຍ ຂອງປະທານ ອົງການກວດກາລັດເມືອງ, ນະຄອນ.

3. ຫົວໜ້າໜ່ວຍງານ, ຮອງຫົວໜ້າໜ່ວຍງານ ແລະ ພະນັກງານວິຊາການ ຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ.

ສຳລັບການແຕ່ງຕັ້ງ, ບັນຈຸ, ສັບຊ້ອນ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການກຳນົດໄວ້.

## ໝວດທີ 4

## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7 ຫຼັກການ**

ອົງການກວດກາລັດເມືອງ, ນະຄອນ ເຄື່ອນໄຫວຕາມຫຼັກການດັ່ງນີ້:

1. ເຮັດວຽກຕາມຫຼັກການລວມສູນປະຊາທິປະໄຕ ແລະ ຕົກລົງບັນຫາເປັນໝູ່ຄະນະກ່ຽວກັບວຽກງານລວມ ຂອງອົງການກວດກາລັດເມືອງ, ນະຄອນ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນ;
3. ທຸກການເຄື່ອນໄຫວວຽກງານ ແມ່ນອີງໃສ່ກົດໝາຍ, ລະບຽບການ ແລະ ນຳເອົານະໂຍບາຍຂອງພັກ-ລັດມາຜັນຂະຫຍາຍຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ມາດຕາ 8 ແບບແຜນວິທີເຮັດວຽກ**

ອົງການກວດກາລັດເມືອງ, ນະຄອນ ມີແບບແຜນວິທີເຮັດວຽກດັ່ງນີ້:

1. ເຮັດວຽກງານ ມີແຜນການ, ແຜນງານ, ມີໂຄງການລະອຽດ, ມີກຳນົດເວລາ ແລະ ປະຕິບັດໜ້າທີ່ວຽກງານຢ່າງມີຈຸດສຸມ;
2. ເຮັດວຽກ ຕ້ອງມີການຕິດຕາມ, ກວດກາ, ຊຸກຍູ້ ແລະ ສະຫຼຸບຖອດຖອນບົດຮຽນ ປະຈຳເດືອນ, 03 ເດືອນ, 06 ເດືອນ, 01 ປີ ຫຼື 05 ປີ;
3. ປະສານສົມທົບກັບຫ້ອງການຕ່າງໆ ແລະ ພາກສ່ວນກ່ຽວຂ້ອງ ເພື່ອແນໃສ່ເຮັດໃຫ້ການເຄື່ອນໄຫວວຽກງານຕິດຕາມ, ກວດກາ ໄດ້ເຄື່ອນໄຫວປົກກະຕິ ແລະ ໄດ້ຮັບການພັດທະນາຢ່າງແຂງແຮງ ຢູ່ທ້ອງຖິ່ນຂອງຕົນ;
4. ປະຕິບັດລະບອບ ຂໍຄຳເຫັນຈາກທ່ານເຈົ້າເມືອງ, ເຈົ້ານະຄອນ ແລະ ປະທານ ອົງການກວດກາລັດຂັ້ນແຂວງ ເປັນປົກກະຕິ; ກໍລະນີມີບັນຫາຮີບດ່ວນຕ້ອງລາຍງານຂໍທິດຊີ້ນຳຈາກຂັ້ນເທິງໃຫ້ທັນເວລາ;
5. ປະຕິບັດລະບອບດຳເນີນຊີວິດການເມືອງ ເປັນປົກກະຕິ, ດຳເນີນກອງປະຊຸມວຽກງານກວດກາທົ່ວເມືອງ, ນະຄອນ ປີລະເທື່ອ ແລະ ຮັບສ່ອງແສງລາຍງານວຽກງານກວດກາ ຈາກຂັ້ນລຸ່ມຖັດຕົນເປັນປົກກະຕິ.

## ໝວດທີ 5

## ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ ແລະ ຕາປະທັບ**

1. ອົງການກວດກາລັດເມືອງ, ນະຄອນ ມີງົບປະມານ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ;

2. ອົງການກວດກາລັດເມືອງ, ນະຄອນ ມີຕາປະທັບຂອງຕົນ ເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ.

**ມາດຕາ 10 ການຜັນຂະຫຍາຍ**

ມອບໃຫ້ປະທານ ອົງການກວດກາລັດເມືອງ, ນະຄອນ ອອກຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງໜ່ວຍງານ ຕາມທີ່ກຳນົດໄວ້ໃນມາດຕາ 05 ຂອງຂໍ້ຕົກລົງສະບັບນີ້ ໃຫ້ລະອຽດຈະແຈ້ງ, ຮັດກຸມ ແລະ ເໝາະສົມ ເພື່ອຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານໃຫ້ໄດ້ຮັບຜົນດີ.

**ມາດຕາ 11 ການຈັດຕັ້ງປະຕິບັດ**

ອົງການກວດກາລັດເມືອງ, ນະຄອນ, ບັນດາຫ້ອງການ ແລະ ອົງການທຽບເທົ່າຂັ້ນເມືອງ, ພ້ອມດ້ວຍພາກສ່ວນກ່ຽວຂ້ອງຈົ່ງຮັບຮູ້, ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກ ໃນຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງ ຂອງອົງການກວດກາແຫ່ງລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງອົງການກວດກາລັດ ແລະ ຕ້ານການສໍ້ລາດບັງຫຼວງ ສະບັບເລກທີ **29**/ອກຫລ, ລົງວັນທີ **24** ກຸມພາ **2022** ແລະ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ປະທານ ອົງການກວດກາແຫ່ງລັດ

ອົງການກວດກາແຫ່ງລັດ
ປະທານ

ຄຳພັນ ພົມມະທັດ